ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້

ເລກທີ ..0050..../ກປ

ນະຄອນຫຼວງວຽງຈັນ, ວັນທີ 18 ກັນຍາ 2017

# ຄຳແນະນຳ

## ກ່ຽວກັບການຂຸດຄົ້ນ ແລະເຄື່ອນຍ້າຍໄມ້ຕິ້ວ, ການເຄື່ອນຍ້າຍຖ່ານຂາວ ທີ່ຜະລິດມາຈາກໄມ້ຕິ້ວ ພາຍໃນ ແລະສົ່ງອອກຕ່າງປະເທດ

ເຖິງ: - ທ່ານ ຫົວໜ້າກົມປ່າໄມ້;
- ທ່ານ ຫົວໜ້າພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ ແລະນະຄອນຫຼວງວຽງຈັນ.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງກະສິກຳ ແລະປ່າໄມ້;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 1355/ຫສນຍ.ກລຂ, ລົງວັນທີ 09 ກັນຍາ 2016 ກ່ຽວກັບການຄຸ້ມຄອງ ແລະສົ່ງອອກເຄື່ອງປ່າຂອງດົງ ແລະໄມ້ຜະລິດຖ່ານ;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 1818/ຫສນຍ.ກສສ, ລົງວັນທີ 18 ພະຈິກ 2016 ກ່ຽວກັບຂັ້ນຕອນການຢັ້ງຢືນຜະລິດຕະພັນໄມ້ (ຂີ້ນລິດ) ເພື່ອສົ່ງອອກໄປຕ່າງປະເທດ;
- ອີງຕາມ ໜັງສືສະເໜີຂອງກົມປ່າໄມ້ ເລກທີ 2148/ກປມ, ລົງວັນທີ 24 ສິງຫາ 2017.

ໃນໄລຍະຜ່ານມາ, ລັດຖະບານ ໄດ້ມີນະໂຍບາຍສົ່ງເສີມການປູກ, ຟື້ນຟູ ແລະຂຸດຄົ້ນໄມ້ຕິ້ວເພື່ອຜະລິດເປັນຖ່ານຂາວ ຈຳໜ່າຍພາຍໃນ ແລະສົ່ງອອກຕ່າງປະເທດ ອັນໄດ້ສ້າງລາຍຮັບໃຫ້ປະຊາຊົນດີພໍສົມຄວນ, ແຕ່ຄຽງຄູ່ກັນນັ້ນ ການຄຸ້ມຄອງຂອງພາກລັດ ຍັງບໍ່ທັນຕິດພັນກັບການຊຸກຍູ້ສົ່ງເສີມປະຊາຊົນປູກ ແລະຟື້ນຟູປ່າໄມ້ຕິ້ວທຳມະຊາດ ຕາມທິດ ສີຂຽວ ແລະຍືນຍົງ, ເກີດມີປະກົດການລັກລອບຕັດ ແລະເຄື່ອນຍ້າຍໄມ້ຕິ້ວທຳມະຊາດ ຢ່າງຊະຊາຍ.

ເພື່ອຄຸ້ມຄອງການເຄື່ອນຍ້າຍ ແລະສົ່ງອອກຖ່ານຂາວ ໃຫ້ເຂົ້າສູ່ລະບຽບກົດໝາຍ ແລະມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ ນັ້ນ,

## ລັດຖະມົນຕີ ກະຊວງກະສິກຳ ແລະປ່າໄມ້ ອອກຄຳແນະນຳ:

1. **ຈຸດປະສົງ:**

ເພື່ອແນະນຳການຈັດຕັ້ງປະຕິບັດ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 1355/ຫສນຍ.ກລຂ, ລົງວັນທີ 09 ກັນຍາ 2016 ກ່ຽວກັບການຄຸ້ມຄອງ ແລະສົ່ງອອກເຄື່ອງປ່າຂອງດົງ ແລະໄມ້ຜະລິດຖ່ານ ແລະແຈ້ງການ ເລກທີ 1818/ຫສນຍ.ກສສ, ລົງວັນທີ 18 ພະຈິກ

2016 ກ່ຽວກັບຂັ້ນຕອນການຢັ້ງຢືນຜະລິດຕະພັນໄມ້ (ຂັ້ນລິດ) ເພື່ອສົ່ງອອກໄປຕ່າງປະເທດ ໃຫ້ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

2. **ການຂຸດຄົ້ນ ແລະເຄື່ອນຍ້າຍໄມ້ຕິ້ວ:**

ການສົ່ງເສີມ ແລະຄຸ້ມຄອງການຂຸດຄົ້ນໄມ້ຕິ້ວ, ການເຄື່ອນຍ້າຍໄມ້ຕິ້ວ ໃຫ້ປະຕິບັດ ດັ່ງນີ້:

- ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ ແລະນະຄອນຫຼວງວຽງຈັນ ເປັນເຈົ້າການປະສານກັບຂະແໜງການກ່ຽວຂ້ອງ ດຳເນີນການສຳຫຼວດ, ຂຶ້ນທະບຽນສວນປູກໄມ້ຕິ້ວ ຫຼືເຂດຟື້ນຟູປ່າໄມ້ຕິ້ວຂອງບຸກຄົນ, ການຈັດຕັ້ງ ແລະລວມໝູ່ ເພື່ອເປັນບ່ອນອີງໃນການພິຈາລະນາອະນຸມັດຂຸດຄົ້ນ, ຢັ້ງຢືນແຫຼ່ງທີ່ມາແລະການເຄື່ອນຍ້າຍໄມ້ຕິ້ວ ໃຫ້ຖືກຕ້ອງຕາມກົດໝາຍ ແລະລະບຽບການ;
- ເພື່ອໃຫ້ຂະບວນການຜະລິດສິນຄ້າຈາກໄມ້ຕິ້ວ ມີຄວາມເຂັ້ມແຂງ ແລະເຂົ້າສູ່ລະບຽບກົດໝາຍນັ້ນ, ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ ແລະນະຄອນຫຼວງວຽງຈັນ ຕ້ອງຊຸກຍູ້, ສົ່ງເສີມປະຊາຊົນສ້າງຕັ້ງກຸ່ມ ຫຼືສະມາຄົມປູກ, ຟື້ນຟູ, ແລະຜະລິດຖ່ານຂາວໃນທ້ອງຖິ່ນຂອງຕົນ;
- ສ່ວນການສະເໜີແຜນຂຸດຄົ້ນໄມ້ຕິ້ວ ໃຫ້ປະຕິບັດຕາມຄຳແນະນຳ ເລກທີ 0054/ກປ, ລົງວັນທີ 09 ມິຖຸນາ 2016 ກ່ຽວກັບການຈັດຕັ້ງຜັນຂະຫຍາຍ ຄຳສັ່ງ ສະບັບເລກທີ 15/ນຍ, ລົງວັນທີ 13 ພຶດສະ ພາ 2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະກວດກາການຂຸດຄົ້ນໄມ້, ເຄື່ອນ ຍ້າຍໄມ້ ແລະທຸລະກິດໄມ້ ຢ່າງເຂັ້ມງວດ ຄື: ການສະເໜີໂກຕາຂອງແຕ່ລະແຂວງໃຫ້ ກົມປ່າໄມ້ ບໍ່ໃຫ້ກາຍວັນທີ 30 ກັນຍາ ຂອງທຸກໆປີ ເພື່ອສະເໜີລັດຖະບານພິຈາລະນາ;
- ສຳລັບ ການຕັດ ແລະເຄື່ອນຍ້າຍໄມ້ຕິ້ວ ຈາກສວນປູກ ແລະເຂດຟື້ນຟູປ່າທີ່ມີທະບຽນ, ເຈົ້າຂອງສວນປູກ ສາມາດດຳເນີນໄດ້ຕະຫຼອດປີ ໂດຍໃຫ້ລາຍງານຕໍ່ໜ່ວຍງານປ່າໄມ້ບ້ານ ແລະມີໃບຢັ້ງຢືນຂອງໜ່ວຍງານປ່າໄມ້ບ້ານ ແລະອົງການປົກຄອງບ້ານກ່ຽວຂ້ອງ;
- ການຕັດ ແລະເຄື່ອນຍ້າຍໄມ້ຕິ້ວຈາກປ່າຊົມໃຊ້ຂອງບ້ານທີ່ບໍ່ໄດ້ມີການຄຸ້ມຄອງຈັດສັນປ່າໄມ້ບ້ານ, ໃຫ້ມີການຕິດຕາມກວດກາລະອຽດ, ການເຄື່ອນຍ້າຍ ຕ້ອງມີການຢັ້ງຢືນຈາກອົງການປົກຄອງບ້ານກ່ຽວຂ້ອງ ແລະຫ້ອງການກະສິກຳແລະປ່າໄມ້ເມືອງ;
- ການຕັດ ແລະເຄື່ອນຍ້າຍໄມ້ຕິ້ວຈາກເຂດພັດທະນາໂຄງລ່າງ ແລະເຂດບຸກເບີກເນື້ອທີ່ທຳການຜະລິດ ໃຫ້ມີການຕິດຕາມກວດກາຢັ້ງຢືນຈາກຂະແໜງປ່າໄມ້ແຂວງ.

3. **ການເຄື່ອນຍ້າຍຖ່ານຂາວ ທີ່ຜະລິດຈາກໄມ້ຕິ້ວ ພາຍໃນ ແລະສົ່ງອອກຕ່າງປະເທດ**

**3.1. ການເຄື່ອນຍ້າຍຜະລິດຕະພັນຖ່ານຂາວພາຍໃນປະເທດ ໃຫ້ປະຕິບັດດັ່ງນີ້:**

- ການເຄື່ອນຍ້າຍຜະລິດຕະພັນຖ່ານຂາວພາຍໃນແຂວງ ໃຫ້ຫ້ອງການກະສິກຳ ແລະປ່າໄມ້ເມືອງກ່ຽວຂ້ອງຢັ້ງຢືນ ແລະນຳໃຊ້ແບບຟອມ ປມ 1;
- ການເຄື່ອນຍ້າຍລະຫວ່າງແຂວງຢູ່ພາຍໃນປະເທດ ໃຫ້ຂະແໜງປ່າໄມ້ຢັ້ງຢືນ ແລະນຳໃຊ້ແບບຟອມ ປມ2;
- ການເຄື່ອນຍ້າຍຜະລິດຕະພັນຖ່ານຂາວ ຕ້ອງໄດ້ກວດກາຄວາມສົມດູນລະຫວ່າງ ຕົວເລກທີ່ໄດ້ຮັບການອະນຸມັດໃຫ້ຂຸດຄົ້ນໄມ້ຕິ້ວ (ໄມ້ສົ້ນເຂົ້າ) ແລະປະລິມານຖ່ານຂາວ (ສົ້ນອອກ) ທີ່ຜະລິດໄດ້.

**3.2. ການເຄື່ອນຍ້າຍຜະລິດຕະພັນຖ່ານຂາວ ອອກຕ່າງປະເທດ ໃຫ້ປະຕິບັດ ດັ່ງນີ້:**

- ຖ່ານຂາວຜະລິດດ້ວຍໄມ້ຕິ້ວ ຈາກສວນປູກ ແລະເຂດຟື້ນຟູປ່າທີ່ມີທະບຽນ ຕ້ອງໄດ້ຮັບການຢັ້ງ

ຢືນຈາກ: ຂະແໜງປ່າໄມ້, ອຸດສາຫະກຳ ແລະການຄ້າ ແລະເຊັນຮັບຮູ້ຈາກ ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ຫຼືນະຄອນຫຼວງວຽງຈັນ ກ່ຽວຂ້ອງ ໂດຍນຳໃຊ້ແບບຟອມ ປມ3;

– ຖ່ານຂາວຜະລິດດ້ວຍໄມ້ຕິ້ວ ຈາກປ່າຊົມໃຊ້ຂອງບ້ານ, ເຂດພັດທະນາໂຄງລ່າງ, ເຂດຂຸດຄົ້ນແຮ່ທາດ ແລະເຂດບຸກເບີກເນື້ອທີ່ການຜະລິດ ຕ້ອງໄດ້ຮັບການຢັ້ງຢືນຈາກ: ຂະແໜງປ່າໄມ້, ອຸດສາຫະກຳແລະການຄ້າ, ຂະແໜງຄຸ້ມຄອງຊັບສິນຂອງລັດ ແລະເຊັນຮັບຮູ້ຈາກ ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ຫຼືນະຄອນຫຼວງວຽງຈັນ ກ່ຽວຂ້ອງ ໂດຍນຳໃຊ້ແບບຟອມ ປມ4.

4. ຫົວໜ່ວຍວັດແທກບໍລິມາດໄມ້ ແລະການເກັບຄ່າທຳນຽມ-ຄ່າບໍລິການ:

ຫົວໜ່ວຍວັດແທກບໍລິມາດໄມ້ ໃຫ້ປະຕິບັດຕາມມາດຕາ 10 ຂອງກົດໝາຍວ່າດ້ວຍການວັດແທກ ສະບັບເລກທີ 36/ສພຊ, ລົງວັນທີ 13 ທັນວາ 2013 ໂດຍນຳໃຊ້ລະບົບເມຕຼິກ, ໃຫ້ຖືເອົາບໍລິມາດກອງໄມ້ຕິ້ວ (ມ$^3$ໄມ້ຟືນ) ໂດຍຖືເອົາຂະໜາດຂອງກອງໄມ້ຕິ້ວ 1 x 1 x 1 ແມັດ ເປັນພື້ນຖານຄິດໄລ່. ສຳລັບການເກັບຄ່າທຳນຽມ ແລະຄ່າບໍລິການ ລວມທັງອັດຕາຊັບພະຍາກອນທຳມະຊາດ ແລະອັດຕາພາສີຂາອອກ ແມ່ນໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ມີຜົນບັງຄັບໃຊ້ໃນແຕ່ລະໄລຍະ.

5. ວິທີການຈັດຕັ້ງປະຕິບັດ:

– ໃຫ້ ຫົວໜ້າກົມກົມປ່າໄມ້, ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ ແລະນະຄອນຫຼວງວຽງຈັນ ຈັດຕັ້ງເຜີຍແຜ່ຄຳແນະນຳສະບັບນີ້ ໃຫ້ກວ້າງຂວາງ, ແທດເຖິງ ແລະທັນເວລາ;
– ມອບໃຫ້ ກົມປ່າໄມ້ ສ້າງເປັນປຶ້ມຄູ່ມື ແລະອອກແບບຟອມເຕັກນິກການສຳຫຼວດໄມ້ຕິ້ວ, ການວັດແທກໄມ້ຕິ້ວ, ການເຄື່ອນຍ້າຍໄມ້ຕິ້ວເຂົ້າໂຮງງານ ແລະການເຄື່ອນຍ້າຍຜະລິດຕະພັນຖ່ານຂາວສົ່ງອອກຕ່າງປະເທດໃຫ້ສາມາດຢັ້ງຢືນແຫຼ່ງທີ່ມາຂອງໄມ້ຕິ້ວ ແລະຜະລິດຕະພັນຖ່ານຂາວທີ່ຜະລິດຈາກໄມ້ຕິ້ວ ເພື່ອຄວາມເປັນເອກະພາບໃນທາງປະຕິບັດ;
– ໃຫ້ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດວຽກງານການຂຸດຄົ້ນ, ເຄື່ອນຍ້າຍໄມ້ຕິ້ວ, ການເຄື່ອນຍ້າຍ ແລະສົ່ງອອກຜະລິດຕະພັນຖ່ານຂາວໃຫ້ ກົມປ່າໄມ້ ຊາບເປັນແຕ່ລະໄລຍະ;
– ໃນການຈັດຕັ້ງປະຕິບັດ ມີຂໍ້ສະດວກ, ຫຍຸ້ງຍາກແນວໃດ ໃຫ້ຮີບຮ້ອນລາຍງານ ກະຊວງກະສິກຳ ແລະປ່າໄມ້ ເພື່ອຫາວິທີແກ້ໄຂຢ່າງທັນການ.

ດັ່ງນັ້ນ, ຈຶ່ງອອກຄຳແນະນຳສະບັບນີ້ ເພື່ອພ້ອມກັນຈັດຕັ້ງປະຕິບັດດ້ວຍຄວາມຮັບຜິດຊອບສູງ.

ລັດຖະມົນຕີ ກະຊວງກະສິກຳ ແລະປ່າໄມ້

ບ່ອນນຳສົ່ງ :

| | | |
|---|---|---|
| 1. | ກະຊວງການເງິນ | 01 ສະບັບ (ເພື່ອຊາບ) |
| 2. | ກ/ຊ ອຸດສາຫະກຳ ແລະການຄ້າ | 01 ສະບັບ (ເພື່ອຊາບ); |
| 3. | ທ່ານ ຮອງລັດຖະມົນຕີ ກປ ທ່ານລະ | 01 ສະບັບ (ເພື່ອລາຍງານ); |
| 4. | ກົມກອດກາປ່າໄມ້ | 01 (ເພື່ອຕິດຕາມ); |
| 5. | ເກັບຮັກສາໄວ້ | 01 ສະບັບ. |

ລັດຖະມົນຕີ

ຈອນ ທີແກ້ວ

ປມ 1

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເມືອງ.............................................
ຫ້ອງການກະສິກຳ ແລະ ປ່າໄມ້ ເລກທີ: ............/ກປມ
ທີ່.............., ລົງວັນທີ:..................

# ໃບຢັ້ງຢືນ

## ການເຄື່ອນຍ້າຍຜະລິດຕະພັນຖ່ານຂາວ ພາຍໃນແຂວງ ແລະ ນະຄອນຫຼວງ

- ອີງຕາມການສະເໜີຂອງໂຮງງານ/ບໍລິສັດ .................................. ເລກທີ ................................

ໃນວັນທີ .........ເດືອນ............. ປີ.......... ຄະນະກຳມະການກວດກາ ແລະຢັ້ງຢືນຜະລິດຕະພັນຖ່ານຂາວ ເພື່ອສົ່ງອອກ ຊຶ່ງປະກອບມີ:

1. ທ່ານ ..............................................................., ຕາງໜ້າ ຫ້ອງການກະສິກຳ ແລະປ່າໄມ້ເມືອງ;
2. ທ່ານ ..............................................................., ຕາງໜ້າ ອົງການປົກຄອງບ້ານ.

ໄດ້ພ້ອມກັນລົງກວດກາຜະລິດຕະພັນຖ່ານຂາວ ຂອງໂຮງງານ/ບໍລິສັດ ............................................ ຕັ້ງຢູ່ບ້ານ ..........................................., ເມືອງ ..............................ແຂວງ............................ ໂດຍຊ້ອງໜ້າ ທ່ານ ......................................., ໃບນາມ ...................................., ໂທລະສັບຕັ້ງໂຕະ: ..........................., ມືຖື: .......................................... ຜະລິດຕະພັນຖ່ານຂາວດັ່ງກ່າວ ຈະເຄື່ອນຍ້າຍ ໄປ: ..................................................................................................................................

1. ຂໍ້ມູນຂອງໂຮງງານ / ບໍລິສັດ:
   1.1. ໃບທະບຽນວິສາຫະກິດ ສະບັບເລກທີ ..........................., ລົງວັນທີ.......................................
   1.2. ໃບອະນຸຍາດດຳເນີນກິດຈະການໂຮງງານ ສະບັບເລກທີ .................., ລົງວັນທີ............................
   1.3. ໃບຢັ້ງຢືນການຊຳລະອາກອນປີຜ່ານມາ ສະບັບເລກທີ ......................, ລົງວັນທີ...........................
   1.4. ສັນຍາຊື້-ຂາຍຜະລິດຕະພັນຖ່ານຂາວ ສະບັບເລກທີ ..........................., ລົງວັນທີ.........................

2. ຈຳນວນຜະລິດຕະພັນຖ່ານຂາວ:

| ລ/ດ | ຍີ່ຫໍ້ລົດ | ເລກທະບຽນ | ຈຳນວນ (ເປົາ, ແກັດ) | ນ້ຳໜັກ ( Kg ) |
|---|---|---|---|---|
| 1 | | | | |
| 2 | | | | |
| 3 | | | | |
| 4 | | | | |
| 5 | | | | |

| ລ/ດ | ຍີ່ຫໍ້ລົດ | ເລກທະບຽນ | ຈຳນວນ (ເປົາ, ແກ່ດ) | ນ້ຳໜັກ ( Kg ) |
|---|---|---|---|---|
| 6 | | | | |
| 7 | | | | |
| 8 | | | | |
| 9 | | | | |
| 10 | | | | |
| ລວມ | | | | |

ໝາຍເຫດ:

1. ຂໍ້ມູນທີ່ກ່າວມາຂ້າງເທິງ ແມ່ນຖືກຕ້ອງ ແລະ ຄົບຖ້ວນຕາມຄວາມຈິງ;
2. ໃບຢັ້ງຢືນສະບັບນີ້ ໃຊ້ແທນໃບອະນຸຍາດເຄື່ອນຍ້າຍສະເພາະ ຜະລິດຕະພັນຖ່ານຂາວທີ່ຜະລິດມາຈາກໄມ້ຕີ້ວ ທີ່ຕັດຈາກສວນປູກໄມ້, ເຂດຟື້ນຟູປ່າໄມ້ຕີ້ວຂອງບຸກຄົນ ແລະ ລວມໝູ່;
3. ໃນກໍລະນີກວດພົບເຫັນວ່າມີການເອົາສິນຄ້າອື່ນປະປົນ ຫຼືບໍ່ສອດຄ່ອງຕາມໃບຢັ້ງຢືນສະບັບນີ້, ຄະນະກຳມະການ, ເຈົ້າຂອງໂຮງງານ/ບໍລິສັດ ແລະ ເຈົ້າຂອງລົດ ຕ້ອງຜູ້ຮັບຜິດຊອບໂດຍກົງຕໍ່ໜ້າກົດໝາຍ;
4. ເວລາເຄື່ອນຍ້າຍຕ້ອງຖືໃບຢັ້ງຢືນຜະລິດຖ່ານຂາວສະບັບນີ້ ໄປພ້ອມທຸກຄັ້ງ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ໃນເວລາກວດກາ;
5. ໃບຢັ້ງຢືນຜະລິດຖ່ານຂາວສະບັບນີ້ ນຳໃຊ້ໄດ້ແຕ່ວັນທີ ......................, ເຖິງ ............................

ຜູ້ອຳນວຍການໂຮງງານ / ບໍລິສັດ

ໜ່ວຍງານປ່າໄມ້ເມືອງ:

1. ................................... , ລາຍເຊັນ: ......................

2. ...................................., ລາຍເຊັນ: ......................

ຢັ້ງຢືນ ແລະ ຮັບຮອງ

ຫົວໜ້າຫ້ອງການກະສິກຳ ແລະປ່າໄມ້ເມືອງ

ປມ 2

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ພະແນກກະສິກຳ ແລະ ປ່າໄມ້ແຂວງ.......................

ຂະແໜງປ່າໄມ້ ເລກທີ: ............../ປມຂ

ທີ່.............., ລົງວັນທີ:.....................

# ໃບຢັ້ງຢືນ

## ການເຄື່ອນຍ້າຍຜະລິດຕະພັນຖ່ານຂາວ ລະຫ່ວາງແຂວງ ຫາ ແຂວງ

- ອີງຕາມການສະເໜີຂອງໂຮງງານ/ບໍລິສັດ...................................... ເລກທີ...............................

ໃນວັນທີ ..........ເດືອນ............... ປີ........... ຄະນະກຳມະການກວດກາ ແລະ ຢັ້ງຢືນຜະລິດຕະພັນຖ່ານຂາວ ເພື່ອສົ່ງອອກ ຊຶ່ງປະກອບມີ:

1. ທ່ານ ........................................................., ຕາງໜ້າ ຂະແໜງປ່າໄມ້ ແຂວງ ແລະ ນະຄອນຫຼວງ;
2. ທ່ານ ........................................................., ຕາງໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ;
3. ທ່ານ ........................................................., ຕາງໜ້າ ອຳນາດການປົກຄອງບ້ານ.

ໄດ້ພ້ອມກັນລົງກວດກາຜະລິດຕະພັນຖ່ານຂາວ ຂອງໂຮງງານ/ບໍລິສັດ ............................................. ຕັ້ງຢູ່ບ້ານ ........................................, ເມືອງ .............................ແຂວງ............................ ໂດຍຊ້ອງໜ້າທ່ານ ......................................, ໃນນາມ........................................., ໂທລະສັບຕັ້ງໂຕະ: ..........................., ມືຖື: ........................................ຜະລິດຕະພັນຖ່ານຂາວດັ່ງກ່າວຈະເຄື່ອນຍ້າຍໄປ: ...................................................................................................................

**1. ຂໍ້ມູນຂອງໂຮງງານ / ບໍລິສັດ:**

1.1. ໃບທະບຽນວິສາຫະກິດ ສະບັບເລກທີ ..........................., ລົງວັນທີ.......................................

1.2. ໃບອະນຸຍາດດຳເນີນກິດຈະການໂຮງງານ ສະບັບເລກທີ ..................., ລົງວັນທີ.............................

1.3. ໃບຢັ້ງຢືນການຊຳລະອາກອນ ສະບັບເລກທີ ......................, ລົງວັນທີ......................................

1.4. ສັນຍາຊື້-ຂາຍຜະລິດຕະພັນຖ່ານຂາວ ສະບັບເລກທີ ..........................., ລົງວັນທີ.........................

**2. ຈຳນວນຜະລິດຕະພັນຖ່ານຂາວ:**

| ລ/ດ | ຍີ່ຫໍ້ລົດ | ເລກທະບຽນ | ຈຳນວນ (ເປົາ, ແກັດ) | ນ້ຳໜັກ (Kg) |
|---|---|---|---|---|
| 1 | | | | |
| 2 | | | | |
| 3 | | | | |
| 4 | | | | |

| ລ/ດ | ຍີ່ຫໍ້ລົດ | ເລກທະບຽນ | ຈຳນວນ (ເປົາ, ແກັດ) | ນ້ຳໜັກ (Kg) |
|---|---|---|---|---|
| 5 | | | | |
| 6 | | | | |
| 7 | | | | |
| 8 | | | | |
| 9 | | | | |
| 10 | | | | |
| ລວມ | | | | |

ໝາຍເຫດ:

1. ຂໍ້ມູນທີ່ກ່າວມາຂ້າງເທິງ ແມ່ນຖືກຕ້ອງ ແລະ ຄົບຖ້ວນຕາມຄວາມຈິງ;
2. ໃບຢັ້ງຢືນສະບັບນີ້ ໃຊ້ແທນໃບອະນຸຍາດເຄື່ອນຍ້າຍສະເພາະ ຜະລິດຕະພັນຖ່ານຂາວທີ່ຜະລິດມາຈາກໄມ້ຕິ້ວ ທີ່ຕັດຈາກສວນປູກໄມ້, ເຂດຟື້ນຟູປ່າໄມ້ຕິ້ວຂອງບຸກຄົນ ແລະ ລວມໝູ່;
3. ກໍລະນີ ກວດພົບເຫັນວ່າ ມີການເອົາສິນຄ້າອື່ນປະປົນ ຫຼື ບໍ່ສອດຄ່ອງຕາມໃບຢັ້ງຢືນສະບັບນີ້, ຄະນະກຳມະການ, ເຈົ້າຂອງໂຮງງານ/ບໍລິສັດ ແລະເຈົ້າຂອງລົດຕ້ອງເປັນຜູ້ຮັບຜິດຊອບໂດຍກົງຕໍ່ໜ້າກົດໝາຍ;
4. ເວລາເຄື່ອນຍ້າຍຕ້ອງຖືໃບຢັ້ງຢືນຜະລິດຖ່ານຂາວສະບັບນີ້ ໄປພ້ອມທຸກຄັ້ງ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ໃນເວລາກວດກາ;
5. ໃບຢັ້ງຢືນຜະລິດຖ່ານຂາວສະບັບນີ້ ນຳໃຊ້ໄດ້ ແຕ່ວັນທີ ......................, ເຖິງ ...........................

ຜູ້ອຳນວຍການໂຮງງານ / ບໍລິສັດ

ຄະນະກຳມະການ:

1. ..................................., ລາຍເຊັນ: ......................
2. ..................................., ລາຍເຊັນ: ......................
3. ..................................., ລາຍເຊັນ: ......................

ຢັ້ງຢືນ ແລະ ຮັບຮອງ
ຫົວໜ້າຂະແໜງປ່າໄມ້ແຂວງ

ປມ 3

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງ/ນະຄອນຫຼວງ..........
ພະແນກກະສິກຳ ແລະ ປ່າໄມ້ ເລກທີ: ............/ກປຂ
ທີ່.................., ລົງວັນທີ:..................

# ໃບຢັ້ງຢືນ
## ຜະລິດຕະພັນຖ່ານຂາວ ເພື່ອສົ່ງອອກ

- ອີງຕາມການສະເໜີຂອງໂຮງງານ/ບໍລິສັດ........................................ ເລກທີ...............................

ໃນວັນທີ ......... ເດືອນ ............ ປີ........... ຄະນະກຳມະການກວດກາ ແລະຢັ້ງຢືນຜະລິດຕະພັນຖ່ານຂາວ ເພື່ອສົ່ງອອກ ຊຶ່ງປະກອບມີ:

1. ທ່ານ ................................................................, ຕາງໜ້າ ຂະແໜງປ່າໄມ້ແຂວງ;
2. ທ່ານ ........................................................, ຕາງໜ້າ ຂະແໜງອຸດສາຫະກຳ ແລະ ການຄ້າແຂວງ.

ໄດ້ພ້ອມກັນລົງກວດກາຜະລິດຕະພັນຖ່ານຂາວ ຂອງໂຮງງານ/ບໍລິສັດ ............................................... ຕັ້ງຢູ່ບ້ານ ........................................, ເມືອງ ............................. ແຂວງ............................... ໂດຍຊື່ອງໜ້າທ່ານ ........................................, ໃນນາມ.........................................., ໂທລະສັບຕັ້ງໂຕະ: ........................, ມືຖື: ................................ ຜະລິດຕະພັນຖ່ານຂາວດັ່ງກ່າວຈະສົ່ງອອກໄປປະເທດ: ............................ ໂດຍຜ່ານດ່ານສາກົນຂາອອກ: .......................................................

1. ຂໍ້ມູນຂອງໂຮງງານ/ບໍລິສັດ:
   1.1. ໃບທະບຽນວິສາຫະກິດ ສະບັບເລກທີ ................................, ລົງວັນທີ..................................
   1.2. ໃບອະນຸຍາດດຳເນີນກິດຈະການໂຮງງານ ສະບັບເລກທີ ..................., ລົງວັນທີ.............................
   1.3. ໃບຢັ້ງຢືນການຊຳລະອາກອນປີຜ່ານມາ ສະບັບເລກທີ ......................, ລົງວັນທີ...........................
   1.4. ສັນຍາຊື້-ຂາຍຜະລິດຕະພັນຖ່ານຂາວ ສະບັບເລກທີ ........................, ລົງວັນທີ...........................

2. ຈຳນວນຜະລິດຕະພັນຖ່ານທີ່ຈະສົ່ງອອກ:

| ລ/ດ | ຍີ່ຫໍ້ລິດ | ເລກທະບຽນ | ຈຳນວນ (ເປົາ, ແກັດ) | ນ້ຳໜັກ (Kg) |
|---|---|---|---|---|
| 1 | | | | |
| 2 | | | | |
| 3 | | | | |
| 4 | | | | |
| 5 | | | | |

| ລ/ດ | ຍີ່ຫໍ້ລົດ | ເລກທະບຽນ | ຈຳນວນ (ເປົາ, ແກັດ) | ນ້ຳໜັກ (Kg) |
|---|---|---|---|---|
| 6 | | | | |
| 7 | | | | |
| 8 | | | | |
| 9 | | | | |
| 10 | | | | |
| ລວມ | | | | |

ໝາຍເຫດ:

1. ຂໍ້ມູນທີ່ກ່າວມາຂ້າງເທິງ ແມ່ນຖືກຕ້ອງ ແລະຄົບຖ້ວນຕາມຄວາມຈິງ;
2. ໃບຢັ້ງຢືນສະບັບນີ້ ໃຊ້ແທນໃບອະນຸຍາດເຄື່ອນຍ້າຍສະເພາະ ຜະລິດຕະພັນຖ່ານຂາວທີ່ຜະລິດມາຈາກໄມ້ຕິ້ວ ທີ່ຕັດຈາກສວນປູກໄມ້, ເຂດຟື້ນຟູປ່າໄມ້ຕິ້ວຂອງບຸກຄົນ ແລະລວມໝູ່;
3. ໃນກໍລະນີກວດພົບເຫັນຢູ່ດ່ານສົ່ງອອກ ວ່າມີການເອົາສິນຄ້າອື່ນປະປົນ ຫຼືບໍ່ສອດຄ່ອງຕາມໃບຢັ້ງຢືນສະບັບນີ້, ຄະນະກຳມະການ ຫຼືຜູ້ຂຽນບິນປ່ອຍ, ເຈົ້າຂອງໂຮງງານ/ບໍລິສັດ ແລະເຈົ້າຂອງລົດເປັນ ຜູ້ຮັບຜິດຊອບໂດຍກົງຕໍ່ໜ້າກົດໝາຍ;
4. ເວລາເຄື່ອນຍ້າຍຕ້ອງຖືໃບຢັ້ງຢືນຜະລິດຖ່ານຂາວສະບັບນີ້ ໄປພ້ອມທຸກຄັ້ງ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ໃນເວລາກວດກາ;
5. ໃບຢັ້ງຢືນຜະລິດຖ່ານຂາວສະບັບນີ້ ນຳໃຊ້ໄດ້ ແຕ່ວັນທີ ......................., ເຖິງ .............................

ຜູ້ອຳນວຍການໂຮງງານ / ບໍລິສັດ

ຄະນະກຳມະການ:

1. ..................................., ລາຍເຊັນ: .......................

2. ..................................., ລາຍເຊັນ: .......................

ຢັ້ງຢືນ ແລະ ຮັບຮອງໂດຍ
ຫົວໜ້າພະແນກກະສິກຳ ແລະ ປ່າໄມ້

ປມ 4

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງ/ນະຄອນຫຼວງ.............................

ພະແນກກະສິກຳ ແລະປ່າໄມ້ ເລກທີ: .............../ກປຂ

ທີ່……………ລົງວັນທີ:......................

# ໃບຢັ້ງຢືນ

## ຜະລິດຕະພັນຖ່ານຂາວ ເພື່ອສົ່ງອອກ

- ອີງຕາມການສະເໜີຂອງໂຮງງານ/ບໍລິສັດ......................................... ເລກທີ.................................

ໃນວັນທີ ..........ເດືອນ............... ປີ........... ຄະນະກຳມະການ ກວດກາ ແລະຢັ້ງຢືນຜະລິດຕະພັນຖ່ານຂາວ ເພື່ອສົ່ງອອກ ຊຶ່ງປະກອບມີ:

1. ທ່ານ ..........................................................., ຕາງໜ້າ ຂະແໜງປ່າໄມ້ແຂວງ;
2. ທ່ານ .........................................................., ຕາງໜ້າ ຂະແໜງອຸດສາຫະກຳ ແລະ ການຄ້າແຂວງ;
3. ທ່ານ …………………………………………………, ຕາງໜ້າ ຂະແໜງຄຸ້ມຄອງຊັບສິນຂອງລັດ ແຂວງ.

ໄດ້ພ້ອມກັນລົງກວດກາຜະລິດຕະພັນຖ່ານຂາວ ຂອງໂຮງງານ/ບໍລິສັດ .................................................. ຕັ້ງຢູ່ບ້ານ ......................................, ເມືອງ ................................ ແຂວງ ………………………. ໂດຍຊ້ອງໜ້າທ່ານ ......................................., ໃນນາມ........................................................, ໂທລະສັບຕັ້ງໂຕະ: ..........................., ມືຖື: ...........................................ຜະລິດຕະພັນຖ່ານຂາວດັ່ງກ່າວ ຈະສົ່ງອອກໄປປະເທດ: …………………………… ໂດຍຜ່ານດ່ານ ....................................................

1. ຂໍ້ມູນຂອງໂຮງງານ / ບໍລິສັດ:

1.1. ໃບທະບຽນວິສາຫະກິດ ສະບັບເລກທີ ..................................................,ລົງວັນທີ ......................
1.2. ໃບອະນຸຍາດດຳເນີນກິດຈະການໂຮງງານ ສະບັບເລກທີ ............................., ລົງວັນທີ.......................
1.3. ໃບຢັ້ງຢືນການຊຳລະອາກອນປີຜ່ານມາ ສະບັບເລກທີ ..............................., ລົງວັນທີ.......................
1.4. ສັນຍາຊື້-ຂາຍຜະລິດຕະພັນຖ່ານຂາວ ສະບັບເລກທີ ................................., ລົງວັນທີ ......................
1.5. ໃບອະນຸມັດແຜນການຂຸດຄົ້ນໄມ້ຕິ້ວ ຂອງກະຊວງ ກປ ສະບັບເລກທີ ............., ລົງວັນທີ .....................
1.6. ໃບອະນຸຍາດຂຸດຄົ້ນໄມ້ຕິ້ວ ສະບັບເລກທີ ..........................................., ລົງວັນທີ ......................

2. ຈຳນວນຜະລິດຕະພັນຖ່ານທີ່ຈະສົ່ງອອກ:

| ລ/ດ | ຍີ່ຫໍ້ລິດ | ເລກທະບຽນ | ຈຳນວນ (ເປົາ, ແກັດ) | ນໍ້າໜັກ(KG) |
|---|---|---|---|---|
| 1 | | | | |
| 2 | | | | |

| ລ/ດ | ຍີ່ຫໍ້ລົດ | ເລກທະບຽນ | ຈຳນວນ (ເປົາ, ແກ໋ດ) | ນ້ຳໜັກ (KG) |
|---|---|---|---|---|
| 3 | | | | |
| 4 | | | | |
| 5 | | | | |
| 6 | | | | |
| 7 | | | | |
| 8 | | | | |
| 9 | | | | |
| 10 | | | | |
| ລວມ | | | | |

ໝາຍເຫດ:

1. ຂໍ້ມູນທີ່ກ່າວມາຂ້າງເທິງ ແມ່ນຖືກຕ້ອງ ແລະ ຄົບຖ້ວນຕາມຄວາມຈິງ;
2. ໃບຢັ້ງຢືນສະບັບນີ້ ໃຊ້ແທນໃບອະນຸຍາດເຄື່ອນຍ້າຍສະເພາະ ຜະລິດຕະພັນຖ່ານຂາວທີ່ຜະລິດມາຈາກໄມ້ຕິ້ວ ທີ່ຕັດຈາກປ່າຊົມໃຊ້ຂອງບ້ານ, ເຂດພັດທະນາໂຄງລ່າງ, ເຂດຂຸດຄົ້ນແຮ່ທາດ ແລະບຸກເບີກເນື້ອທີ່ທຳການຜະລິດ;
3. ກໍລະນີ ກວດພົບເຫັນຢູ່ດ່ານສົ່ງອອກ ວ່າມີການເອົາສິນຄ້າອື່ນປະປົນ ຫຼື ບໍ່ສອດຄ່ອງຕາມໃບຢັ້ງຢືນສະບັບນີ້, ຄະນະກຳມະການ, ເຈົ້າຂອງໂຮງງານ/ບໍລິສັດ ແລະ ເຈົ້າຂອງລົດ ຕ້ອງເປັນຜູ້ຮັບຜິດຊອບໂດຍກົງຕໍ່ໜ້າກົດໝາຍ;
4. ເວລາເຄື່ອນຍ້າຍ ຕ້ອງຖືໃບຢັ້ງຢືນຜະລິດຖ່ານຂາວສະບັບນີ້ ໄປພ້ອມທຸກຄັ້ງ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ໃນເວລາກວດກາ;
5. ໃບຢັ້ງຢືນຜະລິດຖ່ານຂາວສະບັບນີ້ ນຳໃຊ້ໄດ້ ແຕ່ວັນທີ ..........................., ເຖິງ .......................

ຜູ້ອຳນວຍການໂຮງງານ / ບໍລິສັດ

ຄະນະກຳມະການ:

1. .............................. , ລາຍເຊັນ: ......................

2................................., ລາຍເຊັນ: ......................

3................................,ລາຍເຊັນ:...................

ຢັ້ງຢືນ ແລະ ຮັບຮອງໂດຍ

ຫົວໜ້າພະແນກກະສິກຳ ແລະປ່າໄມ້